| ວິທີຄິດທີ່ຄຳນຶງເຖິງມະນຸດເປັນໃຈກາງ | ລະດັບ 1: ລະດັບຮຽນຮູ້ (Acquire) | ລະດັບ 2: ລະດັບລົງເລິກ (Deepen) | ລະດັບ 3: ລະດັບສ້າງສັນ (Create) |
|---|---|---|---|
| ສະມັດຖະພາບຂອງຄູ | 1.1 ບົດບາດໃນການຕັດສິນໃຈຂອງມະນຸດ:<br><br>ຄູມີຄວາມເຂົ້າໃຈຢ່າງວິເຄາະວ່າມະນຸດເປັນຕົວຂັບເຄື່ອນເອໄອ ແລະ ການຕັດສິນໃຈຂອງທັງອົງກອນ ຫຼື ບຸກຄົນທີ່ສ້າງເອໄອ ມີຜົນຢ່າງຍິ່ງ ຕໍ່ສິດ ແລະ ຄວາມເປັນເອກະລາດຂອງມະນຸດ ແລະ ຮັບຮູ້ເຖິງຄວາມສຳຄັນຂອງບົດບາດໃນການຕັດສິນໃຈຂອງມະນຸດໃນເວລາ ປະເມີນ ແລະ ນຳໃຊ້ເຄື່ອງມືເອໄອ. | 1.2 ຄວາມຮັບຜິດຊອບຂອງມະນຸດ:<br><br>ຄູສາມາດສະແດງໃຫ້ເຫັນເຖິງຄວາມເຂົ້າໃຈທີ່ເລິກເຊິ່ງກ່ຽວກັບຄວາມຮັບຜິດຊອບຂອງມະນຸດ ແລະ ການກຳນົດຂອງມະນຸດໃນການນຳເອໄອມາໃຊ້ໃຫ້ເໝາະສົມ, ພ້ອມທັງມີຄວາມສາມາດໃນການປະເມີນຢ່າງວິເຄາະສັກກະຍະພາບຂອງເອໄອໃນການສະໜັບສະໜູນຂະບວນການຕັດສິນໃຈຮ່ວມກັນລະຫວ່າງມະນຸດກັບເອໄອ, ລວມທັງຕັ້ງຂໍ້ສັງເກດຢ່າງມີເຫດຜົນຕໍ່ການກ່າວອ້າງເກີນຈິງກ່ຽວກັບການໃຊ້ເອໄອມາແທນທີ່ມະນຸດໃນການຕັດສິນບັນຫາທີ່ມີຜົນກະທົບສູງໃນ ການສຶກສາ. | 1.3 ຄວາມຮັບຜິດຊອບຕໍ່ສັງຄົມ:<br><br>ຄູສາມາດມີສ່ວນຮ່ວມຢ່າງຫ້າວຫັນ ແລະ ມີບົດບາດໃນການສ້າງ ສັງຄົມເອໄອທີ່ກວມລວມທົ່ວເຖິງ, ໂດຍມີພື້ນຖານຈາກຄວາມເຂົ້າໃຈຜ່ານການຄິດວິເຄາະກ່ຽວກັບຜົນກະທົບຂອງເອໄອຕໍ່ບັນທັດຖານທາງສັງຄົມ, ສົ່ງເສີມການອອກແບບ ແລະ ການນຳໃຊ້ເອໄອເພື່ອຍົກລະດັບສະຫວັດດີພາບຂອງມະນຸດ, ສົ່ງເສີມການມີສ່ວນຮ່ວມຂອງທຸກກຸ່ມຄົນ ແລະ ຄວາມຍຸຕິທຳໃນສັງຄົມ. |
| ເປົ້າໝາຍຂອງຫຼັກສູດ (CG) (ຫຼັກສູດຝຶກອົບຮົມ ຫຼື ສະໜັບສະໜູນຄູຄວນຈະ...) | CG1.1.1 ສົ່ງເສີມການຄິດວິເຄາະກ່ຽວກັບເອໄອ ໂດຍຈັດໃຫ້ຄູສົນທະນາ ແລະ ແລກປ່ຽນມຸມມອງກ່ຽວກັບສະຖານະການທີ່ຕ້ອງເລືອກລະຫວ່າງປະໂຫຍດທີ່ເອໄອນຳສະເໜີ ກັບ ຄວາມສ່ຽງທີ່ອາດຈະເຮັດໃຫ້ເອກະລາດ ແລະ ບົດບາດໃນການຕັດສິນໃຈຂອງມະນຸດຫຼຸດລົງ; ນຳໃຊ້ເຄື່ອງມືເອໄອໃດໜຶ່ງເພື່ອຊ່ວຍໃຫ້ຄູໄດ້ວິເຄາະປະໂຫຍດ, ຂໍ້ຈຳກັດ ແລະ ຄວາມສ່ຽງ ຂອງເອໄອໃນບໍລິບົດຂອງການສຶກສາໃນພື້ນທີ່ຂອງຕົນເອງ ໂດຍອີງໃສ່ວຽກງານທີ່ຕົນຮັບຜິດຊອບ.<br><br>CG1.1.2<br>ອະທິບາຍຂັ້ນຕອນທີ່ສຳຄັນໃນວົງຈອນຊີວິດຂອງລະບົບເອໄອ ແລະ ແນະນຳຄູໃຫ້ເຂົ້າໃຈວ່າ ການຕັດສິນໃຈຂອງຜູ້ສ້າງເອໄອ ທັງໃນລະດັບອົງກອນ ແລະ ບຸກຄົນ ອາດສົ່ງຜົນຕໍ່ຜົນກະທົບຂອງເອໄອແນວໃດ. | CG1.2.1<br>ເສີມສ້າງຄວາມເຂົ້າໃຈຂອງຄູໃຫ້ເລິກເຊິ່ງຍິ່ງຂຶ້ນກ່ຽວກັບຄວາມສ່ຽງທີ່ອາດຈະເກີດຂຶ້ນ ຖ້າຂາດຄວາມຮັບຜິດຊອບຂອງມະນຸດ ໂດຍການສຶກສາກໍລະນີຕົວຢ່າງໃນການນຳໃຊ້ເອໄອໃນຂະບວນການຕັດສິນໃຈດ້ານການຄຸ້ມຄອງການສຶກສາ, ການປະເມີນຜົນການຮຽນ, ຍຸດທະສາດການສອນ ແລະ ການພົວພັນລະຫວ່າງນັກຮຽນກັບເອໄອ, ເສີມຂະຫຍາຍມຸມມອງ ແລະ ເນັ້ນຢ້ຳຄວາມສຳຄັນຂອງບົດບາດຂອງມະນຸດໃນຖານະເປັນຜູ້ຮັບຜິດຊອບທີ່ສຳຄັນໃນຕະຫຼອດວົງຈອນຊີວິດຂອງເອໄອ.<br><br>CG1.2.2<br>ພັດທະນາຄວາມເຂົ້າໃຈວ່າຄວາມຮັບຜິດຊອບຂອງມະນຸດເປັນພັນທະທາງກົດໝາຍ ໂດຍການຊຸກຍູ້ໃຫ້ຄູໂຕ້ວາທີວ່າ ຄວນເປັນມະນຸດ ຫຼື ເອໄອ ທີ່ຕ້ອງຮັບຜິດຊອບໃນຂະບວນການຕັດສິນໃຈທີ່ມີເອໄອເປັນເຄື່ອງມືຊ່ວຍ; ແນະນຳແນວທາງໃຫ້ຄູສຶກສາທົບທວນວ່າ | CG1.3.1<br>ສົ່ງເສີມຄວາມເຂົ້າໃຈຜ່ານການຄິດວິເຄາະກ່ຽວກັບຄວາມສຳຄັນຂອງການປົກປ້ອງສະຫວັດດີພາບທາງສັງຄົມ ແລະ ຈິດໃຈຂອງມະນຸດຈາກການຊັກຈູງຂອງເອໄອທີ່ຂັບເຄື່ອນດ້ວຍຜົນປະໂຫຍດທາງການຄ້າ; ຈັດກິດຈະກຳໂຕ້ວາທີ ຫຼື ກິດຈະກຳການຮຽນຮູ້ທີ່ອີງໃສ່ການຄົ້ນຄວ້າວິໄຈ ໃຫ້ແກ່ຄູກ່ຽວກັບວິທີການທີ່ບໍລິສັດເອໄອສ້າງຜົນກຳໄລ ໂດຍການສົ່ງເສີມພຶດຕິກຳເສບຕິດເຕັກໂນໂລຊີ ແລະ ຄວາມຮູ້ສຶກໂດດດ່ຽວ, ສະໜັບສະໜູນຄວາມຄິດປັດເຈກນິຍົມ (ການໃຫ້ຄວາມສຳຄັນກັບຕົວເອງຫຼາຍກວ່າສ່ວນລວມ) ແລະ ຄວາມເຫັນແກ່ຕົວ ລວມທັງການຈັດລຳດັບຄວາມສຳຄັນຂອງຄົນອີງຕາມຄຸນລັກສະນະທາງສັງຄົມຂອງພວກເຂົາ; ແນະນຳແນວທາງໃຫ້ຄູສ້າງຄວາມເຂົ້າໃຈທີ່ຫຼາກຫຼາຍອີງຕາມບໍລິບົດທີ່ປ່ຽນແປງ ວ່າ ການປົກປ້ອງສິດທິມະນຸດສຳລັບທຸກຄົນ ແລະ |

| | | | |
|---|---|---|---|
| | CG1.1.3 ເນັ້ນຢ້ຳວ່າ ການເອື່ອຍອີງເອໄອຫຼາຍຈົນເກີນໄປນັ້ນ ອາດຈະບັ່ນທອນ ທັກສະໃນການຄິດ ແລະ ບົດບາດໃນການຕັດສິນໃຈຂອງມະນຸດໄດ້ແນວໃດ.<br><br>CG1.1.4 ສະເໜີກິດຈະກຳການຂຽນຄຳແນະນຳພື້ນຖານເພື່ອຊ່ວຍປົກປ້ອງບົດບາດໃນການຕັດສິນໃຈຂອງມະນຸດໃນເວລານຳໃຊ້ເອໄອເຂົ້າໃນວຽກງານການສຶກສາ, ໂດຍເອົາໃຈໃສ່ເປັນພິເສດຕໍ່ນັກຮຽນທີ່ມີຄວາມຕ້ອງການພິເສດ. | ກອບກົດລະບຽບໃນລະດັບທ້ອງຖິ່ນ ແລະ ລະດັບສາກົນກຳນົດຄວາມຮັບຜິດຊອບຂອງມະນຸດໄວ້ແນວໃດໃນການອອກແບບເອໄອ ແລະ ການໃຫ້ບໍລິການທີ່ກ່ຽວຂ້ອງກັບເອໄອ ລວມທັງໃນດ້ານການສຶກສາ.<br><br>CG1.2.3<br>ສ້າງຄວາມເຊື່ອມໂຍງລະຫວ່າງຄວາມຮັບຜິດຊອບຂອງມະນຸດ ແລະ ສິດທິຂອງຄູ ໂດຍເນັ້ນໃຫ້ເຫັນເຖິງບົດບາດ ແລະ ຄວາມຮັບຜິດຊອບຂອງຄູທີ່ປ່ຽນແປງໄປ, ພ້ອມທັງເນັ້ນໜັກວ່າບົດບາດສຳຄັນຂອງຄູແມ່ນບໍ່ສາມາດຖືກແທນທີ່ໄດ້ ແລະ ຄວາມຮັບຜິດຊອບ ລວມທັງ ຄວາມເປັນເອກະລາດຂອງຄູກໍບໍ່ສາມາດຖືກບັ່ນທອນ ຫຼື ແທນທີ່ດ້ວຍເອໄອ; ສະໜັບສະໜູນໃຫ້ຄູທົບທວນຄືນວ່ານະໂຍບາຍໃນທ້ອງຖິ່ນໄດ້ປົກປ້ອງສິດ ແລະ ຄວາມຮັບຜິດຊອບຂອງຄູໃນຍຸກເອໄອ ຫຼື ບໍ່.<br><br>CG1.2.4<br>ເປີດເຜີຍຄວາມສ່ຽງທີ່ເກີດຈາກການທີ່ຜູ້ໃຊ້ບໍ່ຕ້ອງຮັບຜິດຊອບຕໍ່ການກະທຳຂອງຕົນໃນການນຳໃຊ້ເອໄອ ໂດຍຊຸກຍູ້ໃຫ້ຄູກວດສອບຂໍ້ຈຳກັດທີ່ສາມາດອະທິບາຍໄດ້ຂອງບາງເຄື່ອງມືເອໄອ (ເຊັ່ນ ການທີ່ເອໄອບໍ່ສາມາດເຂົ້າໃຈໂລກແຫ່ງຄວາມເປັນຈິງ ຫຼື ຕັດສິນກ່ຽວກັບຄຸນຄ່າໄດ້), ລວມທັງ ການທີ່ເອໄອແຕ່ງຂໍ້ມູນຂຶ້ນມາເອງໂດຍບໍ່ສາມາດອະທິບາຍໄດ້ວ່າມາຈາກໃສ, ຄຳຕອບທີ່ຜິດພາດ ແລະ ການນຳສະເໜີຂໍ້ເທັດຈິງຢ່າງບໍ່ຖືກຕ້ອງໃນເຄື່ອງມືເອໄອລຸ້ນປັດຈຸບັນ; ສົນທະນາກ່ຽວກັບຄວາມສ່ຽງທີ່ເອໄອອາດຈະກໍ່ໃຫ້ເກີດຕໍ່ການຮຽນຮູ້ຂອງນັກຮຽນ ໂດຍສະເພາະກຸ່ມທີ່ມີຄວາມຕ້ອງການພິເສດ (ເຊັ່ນ ເຮັດໃຫ້ພັດທະນາການທາງສະຕິປັນຍາຫຼຸດລົງ, ຄວາມສາມາດໃນການຄິດວິເຄາະຖົດຖອຍ, ຫຼຸດການພົວພັນກັນລະຫວ່າງມະນຸດ, ບັ່ນທອນການສ້າງອົງຄວາມຮູ້ ແລະ ເຮັດໃຫ້ຍາກຕໍ່ການສ້າງ ແລະ ສະແດງຄວາມຄິດເຫັນຢ່າງອິດສະຫຼະ). | ການສົ່ງເສີມຄວາມຍຸຕິທຳໃນສັງຄົມແມ່ນພື້ນຖານຫຼັກຂອງຈັນຍາທຳຂອງເອໄອ, ແລະ ກະຕຸ້ນໃຫ້ຄູຕັ້ງຄຳຖາມ ແລະ ນຳສະເໜີຂໍ້ວິພາກວິຈານກ່ຽວກັບຄວາມສຳຄັນຂອງການຖ່ວງດຸນຜົນປະໂຫຍດທາງການຄ້າກັບສະຫວັດດີພາບທາງສັງຄົມ ແລະ ຈິດໃຈຂອງມະນຸດ ແລະ ສຸຂະພາບຂອງສິ່ງມີຊີວິດອື່ນໃນໂລກ.<br><br>CG1.3.2<br>ເປີດໂອກາດໃຫ້ຄູໄດ້ຈິນຕະນາການຄືນໃໝ່ເຖິງສັງຄົມທີ່ປອດໄພ, ກວມລວມທົ່ວເຖິງ ແລະ ເປັນທຳ; ຈັດສຳມະນາ, ການສົນທະນາເປັນກຸ່ມ ແລະ ກິດຈະກຳຮ່ວມມືເພື່ອໃຫ້ຄູໄດ້ຮ່ວມກັນພິຈາລະນາວ່າ ສັງຄົມທີ່ເປັນລະບຽບ, ກວມລວມທົ່ວເຖິງ, ຍຸຕິທຳ ແລະ ເປັນມິດຕໍ່ດິນຟ້າອາກາດໃນຍຸກເອໄອຄວນມີລັກສະນະແນວໃດ, ໄພຄຸກຄາມໃດທີ່ເອໄອອາດກໍ່ຂຶ້ນຕໍ່ບັນທັດຖານທາງສັງຄົມເຫຼົ່ານີ້ ແລະ ມີຂໍ້ຕົກລົງ ຫຼື ກົດລະບຽບໃດທີ່ສາມາດນຳມາໃຊ້ໄດ້ ຫຼື ຄວນພັດທະນາຂຶ້ນໃໝ່.<br><br>CG1.3.3<br>ຊຸກຍູ້ການເຊື່ອມຊຶມຄວາມຮັບຜິດຊອບຕໍ່ສັງຄົມໃນຖານະເປັນພົນລະເມືອງຂອງສັງຄົມຍຸກເອໄອ ໂດຍການຈັດກອງປະຊຸມສຳມະນາທີ່ເນັ້ນການປະຕິບັດໃຫ້ຄູເພື່ອຮ່ວມກັນກຳນົດຄວາມໝາຍຂອງການເປັນພົນລະເມືອງໃນຍຸກເອໄອ, ໂດຍການຊຸກຍູ້ໃຫ້ຄູຄົ້ນຄວ້າວ່າ ຄວາມຮັບຜິດຊອບທາງດ້ານກົດໝາຍ ແລະ ສັງຄົມຂອງພວກເຂົາອາດປ່ຽນແປງໄປແນວໃດ ແລະ ສົນທະນາແນວທາງໃນການຍົກສູງ ແລະ ເສີມສ້າງຄວາມເຂັ້ມແຂງໃນສິດທິ ແລະ ພັນທະຕົ້ນຕໍທາງສັງຄົມທີ່ພົນລະເມືອງໃນຍຸກເອໄອຕ້ອງມີ. |

| **ວິທີຄິດທີ່ຄໍານຶງເຖິງມະນຸດເປັນໃຈກາງ** | **ລະດັບ 1: ລະດັບຮຽນຮູ້ (Acquire)** | **ລະດັບ 2: ລະດັບລົງເລິກ (Deepen)** | **ລະດັບ 3: ລະດັບສ້າງສັນ (Create)** |
|---|---|---|---|
| ຈຸດປະສົງຂອງການຮຽນຮູ້ (LO) (ຖູສາມາດ....) | LO1.1.1 ສະທ້ອນຄິດແບບວິເຄາະກ່ຽວກັບປະໂຫຍດ, ຂໍ້ຈໍາກັດ ແລະ ຄວາມສ່ຽງຂອງເຄື່ອງມືເອໄອໃດໜຶ່ງ ໃນສະຖານການສຶກສາໃນທ້ອງຖິ່ນຂອງຕົນ ແລະ ໃນສາຂາວິຊາ ແລະ ລະດັບຊັ້ນຮຽນທີ່ຕົນສອນ.<br><br>LO1.1.2<br>ສະແດງໃຫ້ເຫັນເຖິງການຮັບຮູ້ວ່າເອໄອຖືກຂັບເຄື່ອນໂດຍມະນຸດ ແລະ ການຕັດສິນໃຈຂອງຜູ້ສ້າງເອໄອ ທັງໃນລະດັບອົງກອນ ແລະ ບຸກຄົນ ສົ່ງຜົນກະທົບຕໍ່ສິດທິມະນຸດ, ບົດບາດໃນການຕັດສິນໃຈຂອງມະນຸດ, ຊີວິດສ່ວນບຸກຄົນ ແລະ ສັງຄົມໂດຍລວມ.<br><br>LO1.1.3<br>ອະທິບາຍບົດບາດຂອງມະນຸດໃນຂັ້ນຕອນພື້ນຖານຂອງ ການພັດທະນາເອໄອ, ຕັ້ງແຕ່ການເກັບກໍາ ແລະ ປະມວນຜົນຂໍ້ມູນ, ການອອກແບບອານໂກຣິດ ແລະ ຟັງເຊີນການເຮັດວຽກຂອງລະບົບເອໄອ, ໄປຈົນເຖິງການນໍາເຄື່ອງມືເອໄອໄປໃຊ້ໃນວຽກຕົວຈິງ.<br><br>LO1.1.4<br>ເຂົ້າໃຈຄວາມຈໍາເປັນໃນການໃຊ້ມາດຕະການພື້ນຖານເພື່ອປົກປ້ອງບົດບາດ/ອໍານາດໃນການຕັດສິນໃຈຂອງມະນຸດໃນແຕ່ລະຂັ້ນຕອນສໍາຄັນຂອງການອອກແບບ ແລະ ການນໍາໃຊ້ລະບົບເອໄອ ໂດຍການຮັບປະກັນການເຄົາລົບສິດຄວາມເປັນເຈົ້າຂອງຂໍ້ມູນ | LO1.2.1<br>ເຂົ້າໃຈວ່າຄວາມຮັບຜິດຊອບຂອງມະນຸດໃນຂະບວນການຕັດສິນໃຈຮ່ວມກັນ ລະຫວ່າງມະນຸດກັບເອໄອ ເປັນພັນທະທາງກົດໝາຍ.<br><br>LO1.2.2 ບັງຄັບໃຊ້ກອບກົດລະບຽບພາຍໃນປະເທດ ແລະ/ຫຼື ໃນລະດັບສາກົນເພື່ອກວດສອບວ່າການອອກແບບ ຫຼື ການນໍາໃຊ້ເຄື່ອງມືເອໄອໃດໜຶ່ງ ໄດ້ຫຼຸດທອນຄວາມຮັບຜິດຊອບຂອງມະນຸດ ຫຼື ບໍ່.<br><br>LO1.2.3 ອ້າງອີງເຖິງນະໂຍບາຍລະດັບສາກົນ ຫຼື ລະດັບຊາດ ເພື່ອເນັ້ນໜັກວ່າຄູຕ້ອງມີຄວາມຮັບຜິດຊອບໃນເວລາທີ່ນໍາໃຊ້ເອໄອ ໃນການສຶກສາ ແລະ ສະແດງຈຸດຢືນທີ່ຕໍ່ຕ້ານການໃຊ້ຜົນຮັບ ແລະ ການຄາດການຂອງເອໄອ ມາແທນທີ່ການຕັດສິນໃຈຂອງຄູ, ຂະບວນການຄິດ, ການສ້າງຄວາມຮູ້ ແລະ ການສະແດງອອກຂອງນັກຮຽນ.<br><br>LO1.2.4<br>ສະແດງໃຫ້ເຫັນເຖິງຄວາມຮັບຜິດຊອບຂອງຄູໃນຂະບວນການຕັດສິນໃຈ ລວມທັງໃນການພິຈາລະນາຄວາມເໝາະສົມຂອງເຄື່ອງມືເອໄອໃນການສິດສອນ, ການອອກແບບວິທີການສອນທີ່ເໝາະສົມກັບອາຍຸຂອງນັກຮຽນ ແລະ ການມີມະນຸດສໍາພັນທີ່ຈໍາເປັນກັບນັກຮຽນ ເພື່ອສົ່ງເສີມຂະບວນການການຮຽນຮູ້ຢ່າງອິດສະຫຼະຂອງນັກຮຽນ ພ້ອມທັງ ໃຫ້ການສະໜັບສະໜູນສະເພາະສໍາລັບນັກຮຽນທີ່ມີຄວາມຕ້ອງການ | LO1.3.1 ປະເມີນ ແລະ ສະທ້ອນຄິດເຖິງຜົນກະທົບຂອງເອໄອຕໍ່ສັງຄົມໂດຍລວມຢ່າງມີການຄິດວິເຄາະ, ໂດຍສະເພາະໃນດ້ານທີ່ກ່ຽວຂ້ອງກັບ ການສຶກສາ, ການເຮັດວຽກ, ການພົວພັນລະຫວ່າງບຸກຄົນ ແລະ ຄວາມສໍາພັນຂອງມະນຸດທັງຕໍ່ກັນ ແລະ ຕໍ່ສິ່ງແວດລ້ອມ.<br><br>LO1.3.2<br>ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການສ້າງນະໂຍບາຍທີ່ກ່ຽວຂ້ອງກັບເອໄອໃນດ້ານການສຶກສາ ທັງໃນລະດັບສະຖາບັນ, ລະດັບທ້ອງຖິ່ນ ແລະ/ຫຼື ລະດັບຊາດ ໂດຍກວມລວມເອົາທັງການໃຊ້ປະໂຫຍດຈາກເອໄອຢ່າງເໝາະສົມ ແລະ ການຫຼຸດຜ່ອນຄວາມສ່ຽງຕໍ່ສັງຄົມ ແລະ ການສຶກສາ.<br><br>LO1.3.3 ເຊື່ອມຊຶມ ແລະ ປະຕິບັດຄວາມຮັບຜິດຊອບທາງສັງຄົມ ແລະ ພົນລະເມືອງໃນຍຸກເອໄອ ແລະ ສົ່ງເສີມການພັດທະນາຄຸນສົມບັດຂອງພົນລະເມືອງດັ່ງກ່າວຜ່ານການສຶກສາ. |

| | | | |
|---|---|---|---|
| | , ການເກັບກຳຂໍ້ມູນດ້ວຍຄວາມຍິນຍອມ, ການໝາຍປ້າຍກຳກັບ ແລະ ການທຳຄວາມສະອາດຂໍ້ມູນໂດຍບໍ່ມີຄວາມລຳອຽງ, ການໃຊ້ອານໂກຣິດເອໄອທີ່ປາດສະຈາກການຈຳແນກ ພ້ອມທັງ ການພັດທະນາຟັງເຊິນ ແລະ ໜ້າຈໍຜູ້ໃຊ້ທີ່ໃຊ້ງ່າຍ. | ພິເສດ. | |

| **ວິທີຄິດທີ່ຄຳນຶງເຖິງມະນຸດເປັນໃຈກາງ** | **ລະດັບ 1: ລະດັບຮຽນຮູ້ (Acquire)** | **ລະດັບ 2: ລະດັບລຶງເລິກ (Deepen)** | **ລະດັບ 3: ລະດັບສ້າງສັນ (Create)** |
|---|---|---|---|
| ກິດຈະກຳຕາມບໍລິບົດ | ໄຈ້ແຍກຂໍ້ເທັດຈິງໃນການກ່າວອ້າງເກີນຈິງກ່ຽວກັບເອໄອ: ຄົ້ນຄວ້າກະແສຄວາມເຊື່ອກ່ຽວກັບເຄື່ອງມືເອໄອໂດຍການວິເຄາະຄວາມສ່ຽງ ແລະ ປະໂຫຍດຂັ້ນພື້ນຖານ ພ້ອມທັງເນັ້ນເຖິງບົດບາດສຳຄັນຂອງມະນຸດໃນການນຳໃຊ້ເຄື່ | ຄວາມຮັບຜິດຊອບຂອງມະນຸດໃນຂະບວນການຕັດສິນໃຈຮ່ວມກັບເອໄອແມ່ນພັນທະທາງກົດໝາຍ: ແຕ້ມແຜນຜັງແນວຄວາມຄິດທີ່ສະແດງວ່າໃຜຄືຜູ້ມີໜ້າທີ່ຮັບຜິດຊອບຫຼັກ ແລະ ບົດບາດຂອງພວກເຂົາໃນການອອກແບບ, | ຄວາມຄິດເຫັນຂອງຄູຕໍ່ກັບສະຫວັດດີພາບຂອງມະນຸດ ແລະ ໂລກໃນຍຸກເອໄອ: ຂຽນບົດຄວາມສະທ້ອນຄວາມຄິດ, ແຕ່ງບົດຂຽນ ຫຼື ບົດບັນທຶກອອນລາຍກ່ຽວກັບວິທີທີ່ຜູ້ໃຫ້ບໍລິການເອໄອ |

| | | | |
|---|---|---|---|
| | ອງມືເອໄອ.<br><br>ເຂົ້າໃຈເຫດຜົນທີ່ບາງເຄື່ອງມືເອໄອຄວນຖືກຫ້າມໃຊ້: ສະແດງໃຫ້ເຫັນຄວາມເຂົ້າໃຈພື້ນຖານກ່ຽວກັບສາເຫດທີ່ບາງເຄື່ອງມືເອໄອ ຄວນຖືກຫ້າມໃຊ້ ເນື່ອງຈາກອາດຈະບັ່ນທອນບົດບາດໃນການຕັດສິນໃຈຂອງມະນຸດ ແລະ ຄຸກຄາມສິດທິມະນຸດ.<br><br>ເນັ້ນໃຫ້ເຫັນຄວາມສ່ຽງ: ບອກວິທີການທີ່ເປັນໄປໄດ້ທີ່ບົດບາດໃນການຕັດສິນໃຈຂອງຄູ ແລະ ນັກຮຽນອາດຈະຖືກບັ່ນທອນໂດຍເຄື່ອງມືເອໄອໃດໜຶ່ງ, ເຊັ່ນ, ການນໍາໃຊ້ ໂມເດວພາສາຂະໜາດໃຫຍ່ (large language models) ໃນການແຕ່ງບົດຂຽນຕ່າງໆສົ່ງຄູ.<br><br>ຮູ້ຫຼັກການປະຕິບັດພື້ນຖານທີ່ຄວນເຮັດ ແລະ ບໍ່ຄວນເຮັດ: ຂຽນຄໍາແນະນໍາສັ້ນໆປະຈໍາວັນ ເພື່ອສົ່ງເສີມບົດບາດໃນການຕັດສິນໃຈຂອງມະນຸດໃນເວລາທີ່ໃຊ້ເອໄອໃນການສິດສອນ ແລະ ເພື່ອສົ່ງເສີມໃຫ້ນັກຮຽນມີບົດບາດໃນການໃຊ້ ແລະ ປະເມີນເອໄອຢ່າງມີການຄິດວິເຄາະ. | ການຕິດຕັ້ງ ແລະ ການນໍາໃຊ້ເອໄອໃນການສຶກສາ ພ້ອມທັງລະບຸຄວາມຮັບຜິດຊອບຂອງມະນຸດທີ່ກ່ຽວຂ້ອງກັບແຕ່ລະພາກສ່ວນ.<br><br>ຄວາມຮັບຜິດຊອບ ແລະ ສິດທິຂອງຄູບໍ່ສາມາດແທນທີ່ໄດ້ໂດຍເອໄອ: ຮ່າງບົດລາຍງານກ່ຽວກັບກົດລະບຽບທີ່ກ່ຽວຂ້ອງທີ່ສຸດ, ສະຖາບັນທີ່ຮັບຜິດຊອບ ແລະ ລະບຽບຂັ້ນຕອນທີ່ສາມາດປົກປ້ອງສິດທິ ແລະ ເນັ້ນເຖິງຄວາມຮັບຜິດຊອບຂອງຄູໃນເວລານໍາເອົາເອໄອເຂົ້າມາໃຊ້ໃນການສຶກສາ.<br><br>ຄວາມຮັບຜິດຊອບຂອງຄູແມ່ນການຮັບປະກັນຂອງມະນຸດເພື່ອໃຫ້ມີການນໍາໃຊ້ເອໄອໃນການສຶກສາຢ່າງມີຈັນຍາທໍາ ແລະ ມີປະສິດທິຜົນ: ແຕ້ມແຜນຜັງແນວຄວາມຄິດກ່ຽວກັບບົດບາດທີ່ຄູສາມາດມີໃນການກວດສອບຄວາມເໝາະສົມ ແລະ ຄັດເລືອກເຄື່ອງມືເອໄອທີ່ແທດເໝາະ, ການອອກແບບວິທີການສອນ, ການຊຸກຍູ້ໃຫ້ມີມະນຸດສໍາພັນ, ການອໍານວຍຄວາມສະດວກໃຫ້ນັກຮຽນໄດ້ນໍາໃຊ້ ເອໄອ ແລະ ການສະໜັບສະໜູນນັກຮຽນທີ່ມີຄວາມສາມາດທີ່ແຕກຕ່າງກັນ. | ທີ່ຖືກຂັບເຄື່ອນດ້ວຍຜົນກໍາໄລສົ່ງຜົນກະທົບຕໍ່ສະຫວັດດີພາບທາງສັງຄົມ ແລະ ຈິດໃຈຂອງມະນຸດ ລວມທັງສະຫວັດດີພາບຂອງສິ່ງແວດລ້ອມ ໂດຍອີງໃສ່ກໍລະນີສຶກສາທີ່ເກີດຂຶ້ນຈິງ ຫຼື ການສັງເຄາະຜົນການຄົ້ນຄວ້າວິໄຈ ແລະ ຜົນສະທ້ອນຕໍ່ການສຶກສາ.<br><br>ການສະທ້ອນ ແລະ ສົ່ງເສີມຄວາມສໍາພັນທາງສັງຄົມທີ່ມີມະນຸດເປັນໃຈກາງ ແລະ ຄວາມສາມັກຄີໃນສັງຄົມ: ຂຽນບົດຄວາມອອນລາຍ ຫຼື ເປັນຜູ້ນໍາພາການສົນທະນາກ່ຽວກັບພາບຂອງຄວາມສໍາພັນ ແລະ ຄວາມສາມັກຄີໃນສັງຄົມທີ່ເປັນທີ່ຕ້ອງການໃນຍຸກເອໄອ, ວິເຄາະອຸປະສັກທາງດ້ານເຕັກໂນໂລຊີ ແລະ ເສດຖະກິດທີ່ຂັດຂວາງການສ້າງຄວາມສໍາພັນລະຫວ່າງມະນຸດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ພ້ອມທັງລະບຸຂໍ້ຕົກລົງໃນລະດັບສາກົນ ແລະ ລະດັບທ້ອງຖິ່ນທີ່ກໍາລັງຖືກພັດທະນາຂຶ້ນເພື່ອມຸ່ງສູ່ສັງຄົມທີ່ເຮົາຕ້ອງການ.<br><br>ສິດ, ພັນທະ, ແລະ ໜ້າທີ່ຮັບຜິດຊອບຂອງພົນລະເມືອງໃນຍຸກເອໄອ: ເຂົ້າຮ່ວມການສົນທະນາ, ປຶກສາຫາລື ຫຼື ປະກອບສ່ວນເຂົ້າໃນການຮ່າງນະໂຍບາຍທີ່ກໍານົດສິດ, ພັນທະ ແລະ ໜ້າທີ່ຮັບຜິດຊອບຂອງພົນລະເມືອງໃນຍຸກເອໄອ. |